# ມະຫາວິທະຍາໄລສະຫວັນນະເຂດ
# SAVANNAKHET UNIVERSITY



**ສົກສຶກສາ 2020-2021**

## ປະຫວັດຄວາມເປັນມາ

ໃນປີ 2005 ກອງປະຊຸມໃຫຍ່ຄັ້ງທີ 06 ຂອງອົງຄະນະພັກແຂວງສະຫວັນນະເຂດ, ໄດ້ມີມະຕິໃຫ້ມີແຜນພັດທະນາຍຸດທະສາດ ເຊິ່ງຖືເອົາການສ້າງຕັ້ງມະຫາວິທະຍາໄລແຫ່ງໃໝ່ໃນຂົງເຂດພາກກາງຂອງປະເທດເປັນບຸລິມະສິດທຳອິດ.

ໃນວັນທີ 27 ມີນາ 2009, ນາຍົກລັດຖະມົນຕີແຫ່ງ ສປປ. ລາວ ໄດ້ອອກດຳລັດ ເລກທີ 091/ນຍ ວ່າດ້ວຍການອະນຸມັດສ້າງຕັ້ງມະຫາວິທະຍາໄລສະຫວັນນະເຂດ ແລະ ວັນທີ 12 ຕຸລາ 2009 ເປັນມື້ເປີດສົກຮຽນຄັ້ງປະຖົມມະເລີກ ພິທີສະເຫຼີມສະຫຼອງວັນສ້າງຕັ້ງມະຫາວິທະຍາໄລສະຫວັນນະເຂດ ຄົບຮອບ 10 ປີ ໃນວັນທີ 12 ຕຸລາ 2019 ທີ່ຜ່ານມາ.

## ວິໄສທັດ

ສ້າງພື້ນຖານໃຫ້ກັບມະຫາວິທະຍາໄລສະຫວັນນະເຂດເປັນມະຫາວິທະຍາໄລທີ່ທັນສະໄໝ ເຊື່ອມໂຍງກັບພາກພື້ນ ແລະ ສາກົນລົງເລິກສ້າງຄວາມເປັນເລີດດ້ານໂລຈິດສຕິກ.

## ພາລະບົດບາດ

ມະຫາວິທະຍາໄລສະຫວັນນະເຂດ ເປັນສູນກາງການສຶກສາຊັ້ນສູງ ແລະ ວັດທະນະທຳຂອງຂົງເຂດພາກກາງ ເຊິ່ງມີພາລະບົດບາດ ໃນການພັດທະນາຊັບພະຍາກອນມະນຸດ ແລະ ຄົ້ນຄວ້າວິທະຍາສາດໃຫ້ມີຄຸນນະພາບ, ແນໃສ່ຕອບສະໜອງແນວທາງນະໂຍບາຍຂອງພັກ ແລະ ລັດຖະບານໃນການພັດທະນາເສດຖະກິດ-ສັງຄົມ, ຊຸກຍູ້ທ່າແຮງເສດຖະກິດຊຸມຊົນໃຫ້ກາຍເປັນສິນຄ້າ ລຶບລ້າງຄວາມທຸກຍາກ ອະນຸລັກ ແລະ ນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ, ສົ່ງເສີມສິລະປະວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າ.

## ພະນັກງານຄູອາຈານ

ພະນັກງານຄູອາຈານທັງໝົດ: 332 ທ່ານ, ຍິງ 145 ທ່ານ
- ພະນັກງານວິຊາການ: 297 ທ່ານ, ຍິງ 120 ທ່ານ
- ວຸດທິການສຶກສາ: ຮສ 2 ທ່ານ, ຍິງ 0 ທ່ານ, ປອ 11 ຍິງ 02 ທ່ານ, ປທ 145 ທ່ານ ຍິງ 50 ທ່ານ
- ພະນັກງານບໍລິຫານ: 33 ທ່ານ, ຍິງ 17 ທ່ານ.

## ໂຄງຮ່າງການຈັດຕັ້ງ ມະຫາວິທະຍາໄລສະຫວັນນະເຂດ



ຮັກສາການອະທິການບໍດີ
ທ່ານ ປອ ສຸລີຍົງ ໄຊໂກສີ



ຮອງອະທິການບໍດີ
ຝ່າຍຄົ້ນຄວ້າວິໄຈ-ຫຼັງປະລິນຍາຕີ
ທ່ານ ຮສ ປອ ສີທາ ເຂັມມະລາດ



ຮອງອະທິການບໍດີ
ຝ່າຍວິຊາການ
ທ່ານ ປອ ບຸນເຮືອງ ນິນຈະເລີນ



ຮອງອະທິການບໍດີ
ຝ່າຍບໍລິຫານ
ທ່ານ ຮສ ປອ ຄູນ ສັກບົວວົງ



ທ່ານ ນາງແສງເດືອນ ຫຼ້າຈັນທະບຸນ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ພ້ອມຄະນະ ທ່ຽວຊົມງານສະແດງຜົນງານຜະລິດຕະພັນ ໃນງານສະເຫຼີມສະຫຼອງການສ້າງຕັ້ງມະຫາວິທະຍາໄລສະຫວັນນະເຂດ ຄົບຮອບ 10 ປີ.




ມອບໃບຍ້ອງຍໍໃຫ້ພະນັກງານຄູ-ອາຈານສອນດີສອນເກັ່ງ




ມອບໃບຍ້ອງຍໍໃຫ້ນັກສຶກສາດີເດັ່ນ

## ຈຳນວນນັກສຶກສາ

ມີນັກສຶກສາທັງໝົດ: 4,555 ຄົນ, ຍິງ 2,679 ຄົນ (2019-2020)

## ຫ້ອງການ ແລະ ພະແນກ

1 . ຫ້ອງການສັງລວມ ແລະ ຮ່ວມມື
2 . ຫ້ອງການຈັດຕັ້ງ ແລະ ກວດກາ
3 . ຫ້ອງການເຄຫະ ແລະ ບໍລິການ
4 . ຫ້ອງການການເງິນ
5 . ຫ້ອງການວິຊາການ ແລະ ຄຸ້ມຄອງວິທະຍາສາດ
6 . ຫ້ອງການຄຸ້ມຄອງນັກສຶກສາ
7 . ຫ້ອງການຄົ້ນຄວ້າ ແລະ ຫ້ອງປະລິນຍາຕີ
8 . ພະແນກປະກັນຄຸນນະພາບ

## ຄະນະວິຊາ

**1 . ຄະນະກະເສດສາດ ແລະ ສິ່ງແວດລ້ອມ**

ສາຂາວິຊາວິທະຍາສາດພືດ
ສາຂາວິຊາວິທະຍາສາດສັດ
ສາຂາວິຊາວິທະຍາສາດສິ່ງແວດລ້ອມ
ສາຂາວິຊາທ່ອງທ່ຽວ ແລະ ອານຸລັກທຳມະຊາດ
ສາຂາວິຊາຈັດສັນແຫຼ່ງນ້ຳ
ສາຂາວິຊາຈັດສັນທີ່ດິນ

**2 .ຄະນະບໍລິຫານທຸລະກິດ**

ສາຂາ ບໍລິຫານການຄ້າ
ສາຂາ ບໍລິຫານທຸລະກິດທົ່ວໄປ
ສາຂາວິຊາບໍລິຫານການຂົນສົ່ງ
ສາຂາ ບໍລິຫານການເງິນ
ສາຂາ ບໍລິຫານການບັນຊີ
ສາຂາ ບໍລິຫານການທະນາຄານ
ສາຂາ ບໍລິຫານການໂຮງແຮມ
ສາຂາ ບໍລິຫານການທ່ອງທ່ຽວ

**3 . ຄະນະວິທະຍາສາດອາຫານ**

ສາຂາວິຊາທຸລະກິດກະເສດ ແລະ ການະຫຼາດ
ສາຂາວິຊາເຕັກໂນໂລຊີການປຸງແຕ່ງ
ສາຂາວິຊາເສດຖະກິດເພື່ອການພັດທະນາຊົນນະບົດ ແລະ ສົ່ງເສີມທຸລະກິດ
ສາຂາວິຊາວິທະຍາການຫຼັງການຜະລິດ ແລະ ສົ່ງເສີມຜະລິດຕະພັນ

**4 . ຄະນະພາສາ ແລະ ມະນຸດສາດ**

ສາຂາວິຊາພາສາອັງກິດ
ສາຂາວິຊາພາສາຝຣັ່ງ
ສາຂາວິຊາສື່ສານມວນຊົນ
ສາຂາວິຊາພາສາຫວຽດນາມ
ສາຂາວິຊາພາສາຍີ່ປຸ່ນ

**5 . ຄະນະສຶກສາສາດ**

ສາຂາວິຊາຄູຄະນິດສາດ
ສາຂາວິຊາຄູຟີຊິກສາດ
ສາຂາວິຊາຄູປະຫວັດສາດ
ສາຂາວິຊາຄູວິທະຍາສາດການເມືອງ
ສາຂາວິຊາຄູພູມສາດ

**6 . ຄະນະວິທະຍາສາດທຳມະຊາດ**

ສາຂາວິຊາເຄມີສາດ
ສາຂາວິຊາຊີວະສາດ
ສາຂາວິຊາຄະນິດສາດ
ສາຂາວິຊາຟີຊິກສາດ

**7 . ຄະນະເຕັກໂນໂລຊີ-ຂໍ້ມູນຂ່າວສານ**

ສາຂາວິຊາເຕັກໂນໂລຊີຂໍ້ມູນຂ່າວສານ
ສາຂາວິຊາເຕັກໂນຊີສື່ປະສົມ
ສາຂາວິຊາເຕັກໂນຊີເຄືອຂ່າຍ

**8 . ຄະນະກະກຣມວິສາວະກຳສາດ**

ສາຂາ ວິຊາວິສະວະກຳໄຟຟ້າ
ສາຂາ ວິຊາວິສະວະກຳຂົນສົ່ງ

**ຫຼັກສູດນານາຊາດ**

ເສດຖະກິດເພື່ອການພັດທະນາຊົນນະບົດ ແລະ ສົ່ງເສີມທຸລະກິດ

**ຫຼັກສູດປະລິນຍາໂທ**

ສາຂາວິຊາການພັດທະນາເສດຖະກິດຊົນນະບົດ
ສາຂາວິຊາບໍລິຫານການສຶກສາ ແລະ ພັດທະນາ

## ການພົວພັນຮ່ວມມື

### ພາຍໃນປະເທດ

- ກະຊວງ ແລະ ອົງການທຽບເທົ່າ
- ມະຫາວິທະຍາໄລ ແລະ ວິທະຍາໄລ
- ສະຖານທູດສະຫະລັດອາເມລິກາ, ຍີ່ປຸ່ນ, ອັງກິດ, ຝຣັ່ງ, ອິນເດຍ, ອິນໂດເນເຊຍ, ອິດສະຕາລີ
- ອົງການໃຈກ້າ (JICA) ປະຈຳ ສ ປ ປ ລາວ
- ພະແນກການຂອງແຂວງ ສະຫວັນນະເຂດ
- ບໍລິສັດ ນິກອນ ລາວຈຳກັດ, ບໍລິສັດ ເບຍລາວ ຈຳກັດ, ທະນາຄານຮ່ວມພັດທະນາ, ທະນາຄານການຄ້າຕ່າງປະເທດລາວມະຫາຊົນ

## ສາກົນ

- ມະຫາວິທະຍາໄລ ສ ປ ຈີນ
- ມະຫາວິທະຍາໄລໃນເອີລົບ
- ມະຫາວິທະຍາໄລໃນ ສສ ຫວຽດນາມ
- ມະຫາວິທະຍາໄລໃນສະຫະລັດອາເມລິກາ
- ໂຄງການ EU: ASIAN FACTORY 4.0, Digi CHE-Asia, FORHEAL, Open-ing-Laos, PARFORM, SEA-ASIA, SFARM

## ການຮ່ວມມືສອງຝ່າຍ

- CHINA
- FINLAND
- JAPAN
- INTER - Org
- PHILIPPINES
- THAILAND
- USA

## ການຮ່ວມມືຫຼາຍຝ່າຍ

- AUF
- EU-SHARE
- IMPARK
- SEAMEO-RIHED
- SEAMEO-SEARCA
- ACNET-EngTech


ເວັບໄຊ http://sku.edu.la
ອີເມວ skulaos@gmail.com
ຕູ້ ປ.ນ 14
ບ້ານ ນາເຊັ່ງ ນະຄອນ ໄກສອນ ພົມວິຫານ
ແຂວງ ສະຫວັນນະເຂດ ສ ປ ປ ລາວ
ໂທລະສັບ: 041 253 286
ແຟກ: 041 252 810